## ເອກະສານປາຖະກະຖາ
## ມູນເຊື້ອກອງທັບປະຊາຊົນລາວ ຄົບຮອບ 76 ປີ

### I. ປະຫວັດການກຳເນີດ ຂອງກອງທັບປະຊາຊົນລາວ.

### 1. ສະພາບແວດລ້ອມກ່ອນການສ້າງຕັ້ງກອງທັບປະຊາຊົນລາວ.

ຊາດລາວແມ່ນຊາດໜຶ່ງທີ່ມີປະຫວັດສາດອັນຍາວນານນັບຫຼາຍພັນປີ, ປະຊາຊົນລາວບັນດາເຜົ່າ ມີນ້ຳໃຈຮັກຊາດອັນດູດດື່ມ, ມີຄວາມສາມັກຄີເປັນປຶກແຜ່ນ, ມີຄວາມດຸໝັ່ນຂະຫຍັນພຽນ ແລະ ມູນເຊື້ອພິລະອາດຫານຕໍ່ສູ້ບໍ່ຍອມຈຳນົນສັດຕູ ເພື່ອປົກປັກຮັກສາຄວາມເປັນເອກະລາດ ແລະ ອິດສະຫຼະພາບແຫ່ງຊາດໄວ້ໃຫ້ໝັ້ນຄົງ; ພາຍຫຼັງເຈົ້າຟ້າງູ່ມ ທ້ອນໂຮມປະເທດລາວເປັນອະນາຈັກລາວ ລ້ານຊ້າງ ໃນສະຕະວັດທີ 14 ແລະ ໃນສະຕະວັດທີ 16 ຖືກສັກດີນາຕ່າງດ້າວເຂົ້າມາຮຸກຮານເອົາເປັນ ຫົວເມືອງສ່ວຍແກ່ພວກເຂົາ; ມາຮອດທ້າຍສະຕະວັດທີ 19 ຫາຕົ້ນສະຕະວັດທີ 20 ພວກລ່າເມືອງ ຂຶ້ນຝຣັ່ງໄດ້ເຂົ້າມາຮຸກຮານ ແລະ ຍຶດຄອງປະເທດລາວ 2 ຄັ້ງ. ຄັ້ງທີໜຶ່ງ: ແຕ່ປີ 1893 - 1945, ຄັ້ງທີ ສອງ: ແຕ່ປີ 1946 - 1954. ຕະຫຼອດໄລຍະເວລາທີ່ຈັກກະພັດຝຣັ່ງປົກຄອງລາວເຮົານັ້ນ, ປະຊາຊົນ ລາວບັນດາເຜົ່າ ສຸດທີ່ທຸກຍາກລຳບາກ, ບໍ່ມີສິດເສລີພາບ, ຍິ່ງໄປກວ່ານັ້ນປະຊາຊົນຍັງປະເຊີນກັບໄພ ອຶດຫິວ, ກົກໜັງສື, ໂລກລະບາດ ແລະ ໄພສັງຄົມເກີດຂຶ້ນຢ່າງໜັກໜ່ວງ; ຍ້ອນທົນ ຕໍ່ການກົດຂີ່ຂູດ ຮີດ ຂອງພວກຈັກກະພັດບໍ່ໄດ້ ປະຊາຊົນລາວບັນດາເຜົ່າ ຈຶ່ງລຸກຂຶ້ນຕໍ່ສູ້, ເດັ່ນກວ່າໝູ່ແມ່ນ ຂະບວນ ການຕໍ່ສູ້ ຂອງພໍ່ກະດວດ, ອົງແກ້ວ - ອົງກົມມະດຳ, ເຈົ້າຟ້າເມືອງສິງ, ເຈົ້າຟ້າປັດໃຈ ແລະ ອື່ນໆ, ແຕ່ວ່າ ຂະບວນການຕໍ່ສູ້ດັ່ງກ່າວບໍ່ໄດ້ຮັບໄຊຊະນະ ຍ້ອນປັດໃຈຕົ້ນຕໍແມ່ນບໍ່ມີພັກນຳພາ.

ວັນທີ 03 ກຸມພາ 1930 ພັກກອມມູນິດອິນດູຈີນໄດ້ຮັບການສ້າງຕັ້ງຂຶ້ນ ໂດຍແມ່ນ ປະທານ ໂຮ່ຈີມິນ ເປັນຜູ້ນຳພາ. ນັບແຕ່ນັ້ນມາ, ຂະບວນການຕໍ່ສູ້ ຂອງປະຊາຊົນ 3 ຊາດອິນດູຈີນກໍ່ໄດ້ຮັບແສງ ສະຫວ່າງການນຳພາ ຂອງພັກ, ເຮັດໃຫ້ການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ ຂອງປະຊາຊົນ 3 ຊາດ ອິນດູຈີນນັບມື້ນັບແຂງແຮງ ແລະ ໄດ້ຮັບໄຊຊະນະຢ່າງຕໍ່ເນື່ອງ.

ເດືອນ 8 ປີ 1945 ກອງທັບແດງໂຊວຽດ ແລະ ພັນທະມິດໄດ້ຜາບແພ້ພວກຟາດຊິດ ເຮັດໃຫ້ ສົງຄາມໂລກຄັ້ງທີ 2 ສິ້ນສຸດລົງ. ໄຊຊະນະອັນໃຫຍ່ຫຼວງ ຂອງການປະຕິວັດ ເດືອນ 8 ປີ 1945 ຢູ່ ຫວຽດນາມ ເປັນເງື່ອນໄຂອັນສະດວກ, ເໝາະສົມ ໃຫ້ແກ່ຂະບວນການຕໍ່ສູ້ ຂອງກຳລັງປະກອບອາວຸດ ແລະ ປະຊາຊົນລາວບັນດາເຜົ່າ. ໂດຍກຳແໜ້ນກາລະໂອກາດທີ່ອຳນວຍດັ່ງກ່າວ, ພັກໄດ້ເດັດດ່ຽວນຳພາ ປະຊາຊົນລຸກຮື້ຂຶ້ນຍຶດອຳນາດການປົກຄອງຈາກຂຸນເສິກຍີ່ປຸ່ນ ແລະ ພວກລ່າເມືອງຂຶ້ນຝຣັ່ງ ໃນວັນທີ 23 ສິງຫາ 1945 ແລະ ໄດ້ປະກາດເອກະລາດ ຕໍ່ຊາວໂລກ ເມື່ອວັນທີ 12 ຕຸລາ 1945.

ປີ 1946 ພວກລ່າເມືອງຂຶ້ນຝຣັ່ງ ໄດ້ກັບຄືນມາຮຸກຮານລາວເປັນ ຄັ້ງທີ 2. ພາຍໃຕ້ການນຳພາ ຂອງພັກກອມມູນິດອິນດູຈີນ, ປະຊາຊົນລາວບັນດາເຜົ່າໄດ້ສືບຕໍ່ດຳເນີນການຕໍ່ສູ້ຕ້ານການຮຸກຮານ ຂອງ ພວກລ່າເມືອງຂຶ້ນຝຣັ່ງ. ເດັ່ນກວ່າໝູ່ ກໍ່ແມ່ນບັ້ນຮົບປ້ອງກັນຕົວເມືອງທ່າແຂກ ໃນວັນທີ 21 ມີນາ 1946 ພາຍໃຕ້ການບັນຊາຂອງ ສະເດັດເຈົ້າ ສຸພານຸວົງ.

ໃນໄລຍະປີ 1946 - 1949 ປະຕິບັດຕາມແນວທາງການຕໍ່ຕ້ານ **"ຍືດເຍື້ອຍາວນານເດັດຂາດມີ ໄຊ"** ຂອງພັກ, ທຸກກຳລັງໄດ້ຫັນລົງສູ່ຊົນນະບົດ ສ້າງເຂດທີ່ໝັ້ນ, ກໍ່ສ້າງຮາກຖານໃນໝູ່ປະຊາຊົນ,

ປຸກລະດົມຂົນຂວາຍປະຊາຊົນ ກໍ່ສ້າງກຳລັງປະກອບອາວຸດ ຢູ່ທ້ອງຖິ່ນ ປະຕິບັດຍຸດທະສາດສົງຄາມກອງຫຼອນ; ໄລຍະນີ້, ສົງຄາມກອງຫຼອນໄດ້ປະກົດຕົວຂຶ້ນ ຢູ່ຫຼາຍທ້ອງຖິ່ນ, ໄດ້ຈັດຕັ້ງເປັນກອງກຳລັງປະກອບອາວຸດ ຂຶ້ນຢ່າງລຽນຕິດເຊັ່ນ:

- ສ້າງຕັ້ງ ກອງຟ້າງຸ່ມ ຢູ່ວຽງຈັນ ( ເດືອນ 1 ປີ 1947 ).
- ສ້າງຕັ້ງ ກອງໄຊຈັກກະພັດ ຢູ່ພາກໃຕ້ ( ເດືອນ 5 ປີ 1947 ).
- ສ້າງຕັ້ງ ກອງປັດໄຈ ຢູ່ຊຽງຂວາງ ( ເດືອນ 4 ປີ 1948 ).
- ສ້າງຕັ້ງ ກອງໄຊເຊດຖາ ຢູ່ພາກກາງ ( ເດືອນ 10 ປີ 1948 ).
- ສ້າງຕັ້ງ ຄະນະຕະລຸມບອນລາວເໜືອ, ກອງໂຄສະນາປະກອບອາວຸດທີ 12, 15 (1948).

**2. ການກຳເນີດ ກອງທັບປະຊາຊົນລາວ.**

ຈາກສະພາບແວດລ້ອມດັ່ງກ່າວ ໂດຍປະຕິບັດຕາມຄຳສັ່ງ ຂອງສູນກາງພັກກອມມູນິດອິນດູຈີນມາຮອດຕອນເຊົ້າຂອງ ວັນທີ 20 ມັງກອນ 1949 ຢູ່ເຂດທີ່ໝັ້ນຖໍ້າແມ ເຂດລາວຣຸ່ງພຽງສາ ເມືອງຊຽງຄໍ້ ແຂວງຫົວພັນ, ທ່ານ ໄກສອນ ພົມວິຫານ ໄດ້ປະກາດສ້າງຕັ້ງ **"ກອງລາດຊະວົງ"** ຂຶ້ນຢ່າງເປັນທາງການ ໂດຍແມ່ນ ທ່ານ ເພັດສະວົງ ເປັນຫົວໜ້າການທະຫານ, ທ່ານ ສີສະຫວາດ ແກ້ວບຸນພັນ ເປັນຫົວໜ້າການເມືອງ ແລະ ທ່ານ ຄຳມູນ ເປັນຮອງຜູ້ບັນຊາການ. ໃນມື້ດຽວກັນນັ້ນ, ໂດຍພາຍໃຕ້ການນຳພາອັນແຫຼມຄົມ ຂອງສາຂາພັກກອມມູນິດອິນດູຈີນ ປະຈຳແດນລາວ ໄດ້ຈັດຕັ້ງກອງປະຊຸມໂດຍເອົາສະຖານທີ່ກອງລາດຊະວົງເປັນບ່ອນປະຊຸມ ແລະ ໄດ້ປະກາດສ້າງຕັ້ງກອງທັບລາວອິດສະຫຼະຢ່າງເປັນທາງການ ໂດຍແມ່ນ ທ່ານ ໄກສອນ ພົມວິຫານ ເປັນຜູ້ປະກາດສ້າງຕັ້ງ ແລະ ເປັນຜູ້ບັນຊາໂດຍກົງ. ຖັດຈາກນັ້ນມາກໍ່ໄດ້ປະກາດຮັບເອົາ, ບັນດາກອງເອກະລາດອື່ນໆເຊັ່ນ: ກອງໄຊຈັກກະພັດ, ກອງຟ້າງຸ່ມ, ກອງປັດໄຈ ແລະ ກອງໄຊເຊດຖາ ໂຮມເຂົ້າເປັນກອງທັບລາວອິດສະຫຼະ; ນັບແຕ່ນັ້ນມາ ວັນທີ 20 ມັງກອນ 1949 ຈຶ່ງກາຍເປັນວັນປະຫວັດສາດແຫ່ງການສ້າງຕັ້ງ ກອງທັບປະຊາຊົນລາວ.

**3. ຄວາມຈຳເປັນພາວະວິໄສ ຂອງການສ້າງຕັ້ງກອງທັບປະຊາຊົນລາວ.**

- ຍ້ອນຂະບວນການປະຕິວັດ ຂອງປະຊາຊົນລາວບັນດາເຜົ່າຜູ້ຮັກຊາດ ໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າງວ່ອງໄວ, ແຂງແຮງ ແລະ ກວ້າງຂວາງ.
- ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງພາລະກິດຕໍ່ສູ້ກອບກູ້ເອົາປະເທດຊາດອອກຈາກການຮຸກຮານ ແລະ ຍຶດຄອງ ຂອງພວກລ່າເມືອງຂຶ້ນຝຣັ່ງ ແລະ ລູກມື ຂອງພວກເຂົາ.
- ຢືນຢູ່ຕໍ່ໜ້າເລ່ກົນເພີ່ມທະວີການຮຸກຮານ, ຍຶດຄອງ ຂອງພວກລ່າເມືອງຂຶ້ນຝຣັ່ງ ແລະ ຂະບວນ

ການປະຕິວັດຕໍ່ສູ້ ຂອງປະຊາຊົນລາວບັນດາເຜົ່າ ນັບມື້ໄດ້ເປີດກວ້າງ, ມັນຮຽກຮ້ອງໃຫ້ມີກຳລັງປະກອບອາວຸດອັນເຂັ້ມແຂງມີການຈັດຕັ້ງນຳພາ, ບັນຊາເປັນເອກະພາບ ເພື່ອເປັນຫຼັກແຫຼ່ງແກ່ນສານຊຸກດັນໃຫ້ສົງຄາມປະຊາຊົນກ້າວໄປເຖິງໄຊຊະນະສົມບູນ.

- ອີງຕາມທິດສະດີຂອງ ທ່ານ ເລນິນ ເວົ້າວ່າ: **"ຢາກກູ້ຊາດ, ປົດປ່ອຍຊາດ ບໍ່ມີເສັ້ນທາງອື່ນໃດນອກຈາກເສັ້ນທາງການປະຕິວັດກຳມະຊີບ ແລະ ຕ້ອງມີເຄື່ອງມືພະເດັດການກຳມະຊີບ".**

**4. ຄວາມໝາຍຄວາມສຳຄັນ ຂອງການສ້າງຕັ້ງ ກອງທັບປະຊາຊົນລາວ.**

- ເປັນເຫດການປະຫວັດສາດໜຶ່ງທີ່ສຳຄັນ ແລະ ເປັນບາດກ້າວແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງການປະຕິວັດ.

- ແມ່ນບາດກ້າວການເຕີບໃຫຍ່ເຂັ້ມແຂງ ຂອງກຳລັງປະກອບອາວຸດປະຕິວັດ.

- ເປັນກຳລັງຫຼັກແຫຼ່ງໃຫ້ຂະບວນການຕໍ່ສູ້ ຂອງປະຊາຊົນລາວ ເພື່ອຍາດເອົາເອກະລາດ.

**II. ຜົນງານໄຊຊະນະ, ການເຕີບໃຫຍ່ຂະຫຍາຍຕົວ ຂອງກອງທັບປະຊາຊົນລາວ ແຕ່ລະໄລຍະ.**

**ກ. ດຳເນີນການປະຕິວັດ ຕໍ່ສູ້ປົດປ່ອຍຊາດ.**

**1. ໄລຍະຕໍ່ສູ້ຕ້ານການຮຸກຮານ ຂອງພວກລ່າເມືອງຂຶ້ນຝຣັ່ງ ແຕ່ປີ 1949 - 1954.**

ນັບແຕ່ປີ 1950 ເປັນຕົ້ນມາ ຈັກກະພັດອາເມລິກາເລີ່ມແຊກຊຶມເຂົ້າມາ ຮ່ວມກັບຈັກກະພັດຝຣັ່ງ ເພື່ອດຳເນີນສົງຄາມຮຸກຮານອິນດູຈີນ ແລະ ໄດ້ວາງແຜນຍຸດທະສາດຊື່ວ່າ **"ແຜນການນາວາ"** ແຜນການນີ້ມີເປົ້າໝາຍດັບສູນກຳລັງປະຕິວັດ ແລະ ຄາດວ່າຈະໃຫ້ສຳເລັດພາຍໃນ 18 ເດືອນ ເພື່ອຕອບໂຕ້ແຜນການດັ່ງກ່າວ ກອງທັບລາວອິດສະຫຼະ ກໍໄດ້ເປີດການບຸກໂຈມຕີສັດຕູຢ່າງລຽນຕິດ ແລະ ໄດ້ຮັບໄຊະນະຢ່າງຕໍ່ເນື່ອງ, ເຮັດໃຫ້ຈັກກະພັດຝຣັ່ງຈຳຕ້ອງຍອມເຊັນສັນຍາເຊີແນວ ໃນວັນທີ 21 ກໍລະກົດ 1954 ໂດຍຮັບຮູ້ຄວາມເປັນເອກະລາດ, ອິດສະຫຼະພາບ ແລະ ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ 3ຊາດອິນດູຈີນ. ພາຍຫຼັງເຊັນສັນຍາເຊີແນວນໍ້າໝຶກຍັງບໍ່ທັນແຫ້ງ ຈັກກະພັດອາເມລິກາ ກໍໂດດເຂົ້າມາແທນຈັກກະພັດຝຣັ່ງ ຈີກສັນຍາເຊີແນວ 1954 ແລະ ດຳເນີນການປາບປາມຂະບວນການປະຕິວັດຢ່າງປ່າເຖື່ອນ; ກຳລັງປະຕິວັດໄດ້ຖອນຕົວໄປເຕົ້າໂຮມ ຢູ່ 2 ແຂວງ ຫົວພັນ ແລະ ຜົ້ງສາລີ; ຕໍ່ໜ້າສະພາບທີ່ຜັນແປດັ່ງກ່າວ ເພື່ອເອົາຊະນະສັດຕູ, ໃນວັນທີ 22 ມີນາ 1955 ພັກປະຊາຊົນປະຕິວັດລາວ ຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນ.

**2. ໄລຍະການຕໍ່ສູ້ກູ້ຊາດຕ້ານການຮຸກຮານ ຂອງຈັກກະພັດອາເມລິກາແຕ່ປີ 1954-1975. ສັງລວມໂດຍຫຍໍ້ ປະກອບມີ: 3 ໄລຍະ, 2 ເຫດການ, 5 ບັ້ນຮົບໃຫຍ່ ປະຫວັດສາດ ດັ່ງນີ້:**

**• ສາມ ໄລຍະທີ່ເປັນປະຫວັດສາດຄື:**

- ໄລຍະທີໜຶ່ງ: ແມ່ນໄລຍະຕ້ານການແຊກແຊງຮຸກຮານ ຂອງຈັກກະພັດອາເມລິກາ, ແຕ່ເດືອນ 7 ປີ 1954 - ເດືອນ 4 ປີ 1964;

- ໄລຍະທີສອງ: ແມ່ນໄລຍະຕ້ານຍຸດທະສາດສົງຄາມພິເສດເພີ່ມທະວີ ຂອງຈັກກະພັດອາເມລິກາ, ແຕ່ເດືອນ 5 ປີ 1964 - ເດືອນ 2 ປີ1973;

- ໄລຍະທີສາມ: ແມ່ນໄລຍະ ຕໍ່ສູ້ປົກປັກຮັກສາສັນຕິພາບ ແລະ ກະກຽມຍຶດອານາດທົ່ວປະເທດຢ່າງສົມບູນ ແຕ່ເດືອນ 3 ປີ 1973 - ວັນທີ 2 ເດືອນ 12 ປີ 1975.

**• ສອງ ເຫດການປະຫວັດສາດຄື:**

- ການຜ່າວົງປິດລ້ອມ ຂອງກອງພັນທີ 2 ຂອງຝ່າຍປະເທດລາວ ຢູ່ທົ່ງໄຫຫີນຊຽງຂວາງ.

- ຜູ້ນຳແນວລາວຮັກຊາດໂຕນອອກຈາກຄຸກໂພນເຄັງ.

**• ຫ້າ ບັ້ນຮົບໃຫຍ່ທີ່ເປັນປະຫວັດສາດຄື:**

- ບັ້ນຮົບ ປົດປ່ອຍຫຼວງນໍ້າທາ ( 6 ພຶດສະພາ 1962 ).

- ປັ້ນຣົບ ນ້ຳບາກ ( 27 ມັງກອນ 1968 ).
- ປັ້ນຣົບ ຜາຖີ່ ( 13 ມີນາ 1968 ).
- ປັ້ນຣົບກູ້ ກຽດ ( ປັ້ນຣົບ 139 ປົດປ່ອຍທົ່ງໄຫຫີນ ) ( 25 ທັນວາ 1969-25 ເມສາ 1971 ).
- ປັ້ນຣົບ ລາມເຊີນ 719 ( 8 ກຸມພາ - 23 ມີນາ 1971 ).

**2.1 ໄລຍະທີໜຶ່ງ: ຕໍ່ສູ້ຕ້ານການແຊກແຊງຮຸກຮານ ຂອງຈັກກະພັດອາເມລິກາ, ແຕ່ເດືອນ 7 ປີ 1954 - ເດືອນ 4 ປີ 1964.**

ໂດຍສວຍໃຊ້ສັນຍາເຈນີແວ ປີ 1954 ຈັກກະພັດອາເມລິກາໄດ້ດຳເນີນກົນອຸບາຍ ແລະ ຢຶດຄອງລາວ ດ້ວຍລັດທິລ່າເມືອງຂຶ້ນແບບໃໝ່, ພວກເຂົາໄດ້ຂະຫຍາຍກຳລັງຈາກ 20.000 ຄົນ ໃນທ້າຍປີ 1954 ເພີ່ມຂຶ້ນເປັນ 25.000 ຄົນ ໃນປີ 1956.

ໄລຍະນີ້ ສັດຕູໄດ້ເປີດປັ້ນຣົບນ້ອຍ - ໃຫຍ່ ຫວັງທຳລາຍເຂດທີ່ໝັ້ນການປະຕິວັດ ( ສອງແຂວງເຕົ້າໂຮມ ) ເຖິງ 685 ຄັ້ງ, ແຕ່ກອງທັບເຮົາໄດ້ຕໍ່ສູ້ຢ່າງເດັດດ່ຽວພິລະອາດຫານ, ສາມາດປັດເຂ່ຍສັດຕູອອກຈາກວົງສູ້ຮົບ 5.388 ບັກ, ຮັກສາ 2 ແຂວງເຕົ້າໂຮມໄວ້ໄດ້ຢ່າງໝັ້ນຄົງ.

ຈາກໄຊຊະນະນີ້ໄດ້ ບັງຄັບໃຫ້ສັດຕູຕ້ອງຍອມເຊັນສັນຍາ ວຽງຈັນ 1957 ແລະ ປະຕິບັດການລວມລາວ ຄັ້ງທີ I, ວັນທີ 27 ເດືອນ 1 ປີ 1957 ລັດຖະບານປະສົມ ຄັ້ງທີ I ໄດ້ຮັບການສ້າງຕັ້ງຂຶ້ນ. ພັກໄດ້ຕົກລົງຈັດຕັ້ງເອົາ 2 ກອງພັນຄື: ກອງພັນທີ 1 ແລະ ກອງພັນທີ 2 ຂອງຝ່າຍປະເທດລາວເຂົ້າຮ່ວມກັບຝ່າຍລາຊະອານາຈັກ ຊຶ່ງປະກອບມີ 1.500 ສະຫາຍ, ສ່ວນກຳລັງປະຕິວັດທີ່ຍັງເຫຼືອນັ້ນແມ່ນກັບຄືນທ້ອງຖິ່ນ ເພື່ອສືບຕໍ່ຂົນຂວາຍປະຊາຊົນກໍ່ສ້າງຮາກຖານ ແລະ ຕໍ່ສູ້ກັບສັດຕູທາງດ້ານກົດໝາຍ. (ການປະຕິບັດການໂຮມລາວ ຄັ້ງທີ I, ເອົາກຳລັງ 2 ກອງພັນ ເຂົ້າຮວມໃນກອງທັບລາຊະອານາຈັກລາວ ແມ່ນຍຸດໂທບາຍຫຼອກເສືອອອກຈາກຖ້ຳ ຂອງສັດຕູ).

ໂດຍປະຕິບັດກົນອຸບາຍຫຼອກເສືອອອກຈາກຖ້ຳ, ຈັກກະພັດອາເມລິກາ ແລະ ລູກມືຂາຍຊາດໄດ້ຮີບຟ້າວລົງມືປາບປາມກຳລັງປະຕິວັດແຕ່ຫົວທີໂລດຄື: **ໜຶ່ງ:** ພວກມັນປາບປາມຂະບວນການຕໍ່ສູ້ທາງການເມືອງ ແລະ ພວກຕໍ່ຕ້ານເກົ່າ; **ສອງ:** ບັງຄັບ 2 ກອງພັນ ຂອງຝ່າຍປະເທດລາວ ໃຫ້ຍອມຈານົນ ຕໍ່ພວກເຂົາ ຊຶ່ງເລີ່ມແຕ່ວັນທີ 11 - 18 ເດືອນ 5 ປີ 1959 ພວກເຂົາໄດ້ເອົາກາລັງ 6 ກອງພັນນ້ອຍ, ໃນນີ້ມີກອງພັນນ້ອຍໂດດຈ້ອງທີ 1 ແລະ ທີ 2, ມີທັງເຮືອບິນ ແລະ ລົດຕັງຊ່ວຍໜູນ ມາປິດລ້ອມ ບັງຄັບປົດອາວຸດທະຫານກອງພັນທີ 2 ຂອງຝ່າຍປະເທດລາວ, ແຕ່ພະນັກງານນັກຮົບ ກອງພັນທີ 2 ຍັງຄົງເດັດດ່ຽວໝຽວແໜ້ນຕໍ່ສູ້ຈົນເຖິງທີ່ສຸດ; ເວລາ 19 ໂມງ 30 ນາທີ ຂອງວັນທີ 18 ເດືອນ 5 ປີ 1959 ກອງພັນທີ 2 ໄດ້ຜ່າວົງປິດລ້ອມ ຂອງສັດຕູໄປສູ່ເຂດທີ່ໝັ້ນ ດ້ວຍຄວາມອາດຫານ ແລະ ປອດໄພ.

ວັນທີ 28/7/1959 ຈັກກະພັດອາເມລິກາ ແລະ ລັດຖະບານ ຜຸຍ ຊະນະນິກອນ ໄດ້ອອກຄຳສັ່ງຈັບສະເດັດເຈົ້າສຸພາ ນຸວົງ ແລະ ລັດຖະບານປະສົມຂອງຝ່າຍແນວລາວຮັກຊາດ ຈຳນວນ 16 ທ່ານໄປກັກຂັງໄວ້ຢູ່ຄຸກໂພນເຄັງ, ແຕ່ພາຍໃຕ້ການນຳພາ ທີ່ສະຫຼາດສ່ອງໃສຂອງພັກ ມາຮອດວັນທີ 24/5/1960 ບັນດາຜູ້ນຳຝ່າຍແນວລາວຮັກຊາດໄດ້ໂຕນອອກຈາກຄຸກໂພນເຄັງ ກັບຄືນໄປສູ່ເຂດທີ່ໝັ້ນດ້ວຍຄວາມປອດໄພ.

ເພື່ອໂຄ່ນລົ້ມລັດຖະບານທີ່ນິຍົມອາເມລິກາ, ປະຕິບັດຕາມຄຳສັ່ງຂອງພັກ, ກອງພັນ 500 ຂອງວີລະຊົນ ສີທອງ ໄດ້ເຂົ້າຮັກສາຕົວເມືອງວຽງຈັນຊ່ວຍຄະນະລັດຖະປະຫານໄວ້ໃນໄລຍະໜຶ່ງ, ຕໍ່ມາໄດ້ຖອຍອອກຈາກນະຄອນຫຼວງວຽງຈັນ ຂະຫຍາຍກຳລັງຕີປົດປ່ອຍບັນດາທ້ອງຖິ່ນຄື: ວັງວຽງ, ກາສີ, ສາລາພູຄູນ, ເມືອງສຸ້ຍ ແລະ ວັນທີ 1/1/1961 ຕີປົດປ່ອຍທົ່ງໄຫຫີນ-ຊຽງຂວາງ. ເລີ່ມແຕ່ນັ້ນມາ , ດ້ວຍບັນຍາກາດຟົດຟື້ນປະຕິວັດຢູ່ໃນທ່າແຮງໃໝ່ ກອງທັບເຮົາໄດ້ເພີ່ມທະວີການສູ້ຮົບຢ່າງດຸເດືອດ ປົດປ່ອຍດິນແດນໄດ້ 2/3 ແລະ ພົນລະເມືອງ 1/3 ຂອງປະເທດ, ກຳລັງປະຕິວັດໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າງກະໂດດຂັ້ນ, ຈາກ 3 ກອງພັນ ກ້າວຂຶ້ນເປັນຫຼາຍສິບກອງພັນ ແລະ ໄດ້ສ້າງຕັ້ງ 2 ເຫຼົ່າຮົບຂຶ້ນ ຄື:ເຫຼົ່າຮົບລົດຕັງ-ຍານເກາະ, ເຫຼົ່າຮົບປ້ອງກັນອາກາດ. ລະດູແລ້ງ 1961 – 1962 ພວກເຮົາໄດ້ບຸກໂຈມຕີສັດຕູຢູ່ສາລາພູຄູນ, ທາງເລກ 8, 9, 12. ພົ້ນເດັ່ນແມ່ນບັ້ນຮົບປົດປ່ອຍຫຼວງນ້ຳທາ (6/5/1962) ບັງຄັບໃຫ້ ພວກສັດຕູຕ້ອງຍອມເຊັນສັນຍາເຊີແນວປີ 1962 ກ່ຽວກັບລາວ ແລະ ປະຕິບັດການລວມລາວ ຄັ້ງທີ II, ສ້າງຕັ້ງລັດຖະບານປະສົມ 3 ຝ່າຍ (ແນວລາວຮັກຊາດ, ກຳລັງເປັນກາງ ແລະ ຝ່າຍວຽງຈັນ).

**2.2 ໄລຍະທີສອງ: ການຕໍ່ສູ້ຕ້ານຍຸດທະສາດ "ສົງຄາມພິເສດເພີ່ມທະວີ" ຂອງຈັກກະພັດອາເມລິກາ 1964 - 1973.**

ເພື່ອເພີ່ມທະວີສົງຄາມຮຸກຮານລາວ ພວກເຂົາໄດ້ປະຕິບັດຍຸດທະສາດ **"ສົງຄາມພິເສດ"** ຂອງຈອນເຊີນ: **"ເອົາຄົນລາວຂ້າຄົນລາວ"** ໂດຍ ສົມທົບ ລະຫວ່າງ ທະຫານຫຸ່ນວຽງຈັນ + ກາລັງພິເສດວ່າງປາວ + ກອງທັບອາກາດອາເມລິກາ ແລະ ທະຫານຮັບຈ້າງໄທ ເຖິງ 30 ກອງພັນ ມີກຳລັງພົນ 21.000 ຄົນ, ພວກເຂົາໄດ້ບຸກໂຈມຕີຂະໜາດໃຫຍ່ເຂົ້າເຂດປົດປ່ອຍ ຂອງກາລັງປະຕິວັດພວກເຮົາ: ເລີ່ມຕົ້ນດ້ວຍ ບັ້ນຮົບ 3 ສອນ, ກິ່ງກະຖັງ, ສອນໄຊ 1, ພູກູດ, ເທວະດາ 1 ແລະ 2, ນ້ຳບາກ, ຜາຖີ່ ແລະ ບັ້ນຮົບສາມັກຄີແກ້ແຄ້ນ (ODN).

ຕໍ່ໜ້າສະພາບການດັ່ງກ່າວ ກອງທັບເຮົາໄດ້ອອກແຮງປັບປຸງກໍ່ສ້າງກຳລັງ ຂອງຕົນ ໃນທຸກດ້ານ, ຍົກສູງທາງດ້ານການເມືອງ - ແນວຄິດ ແລະ ດ້ານສິລະປະຍຸດຍຸດທະວິທີ ແລະ ໄດ້ສ້າງຕັ້ງ 3 ເຫຼົ່າຮົບຂຶ້ນ (ເຫຼົ່າຮົບທະຫານອາກາດ, ເຫຼົ່າຮົບປືນໃຫຍ່ ແລະ ເຫຼົ່າຮົບເຄມີ). ພິເສດມີກອງຮ້ອຍ 769 ເປັນກອງກຳລັງໄຟເພດຍິງ.

ເພື່ອໃຫ້ສອດຄ່ອງກັບໜ້າທີ່ການເມືອງ ຂອງກອງທັບໃນໄລຍະໃໝ່ ກອງທັບລາວອິດສະຫຼະ ໄດ້ປ່ຽນຊື່ມາເປັນ ກອງທັບປົດປ່ອຍປະຊາຊົນລາວ ໃນວັນທີ 1 ເດືອນ 10 ປີ 1965. ເລີ່ມຈາກນັ້ນ ກຳລັງພວກເຮົາໄດ້ບຸກຕີຢ່າງແຂງແຮງເຂົ້າໃສ່ 2 ກຳລັງຍຸດທະສາດ ຂອງສັດຕູ ( ກຳລັງພິເສດວ່າງປາວ ແລະ ຝ່າຍຂວາວຽງຈັນ ) ໃຫ້ປະລາໄຊຢ່າງໜັກໜ່ວງ, ປີ 1967 - 1968 ພວກເຮົາໄດ້ເປີດບັ້ນຮົບຕ່າວໂຈມຕີສັດຕູ ບັ້ນຮົບນ້ຳບາກ, ຖ້ຳລານາຄັງ ແລະ ບັ້ນຮົບຜາຖີ່ ເຮັດໃຫ້ຝ່າຍຂວາວຽງຈັນເສຍຫາຍໜັກ ແລະ ກຳລັງພິເສດວ່າງປາວ ກໍ່ຖືກບັ່ນທອນຢ່າງໜັກໜ່ວງ, ໄຊຊະນະບັ້ນຮົບນ້ຳບາກ ປີ 1968 ເປັນຂີດໝາຍສຳຄັນໃນປະຫວັດສາດ.

ປີ 1969 - 1971 ເພື່ອຊິງເອົາທ່າໄດ້ປຽບ, ສັດຕູໄດ້ປະຕິບັດຍຸດທະສາດ **"ສົງຄາມພິເສດເພີ່ມທະວີ"** ໂດຍໄດ້ ສົມທົບ 3 ກຳລັງ: ຝ່າຍຂວາວຽງຈັນ + ທັບອາກາດອາເມລິກາ + ທະຫານຮັບຈ້າງໄທ.

ຢູ່ໃນໄລຍະນີ້, ກອງທັບເຮົາໄດ້ສົມທົບກັບ ກອງທະຫານອາສາສະໝັກຫວຽດນາມຕີດັບສູນກຳລັງພິເສດ ວ່າງປາວ, ທະຫານຫຸ່ນໄຊ່ງ່ອນ, ທະຫານຮັບຈ້າງໄທ, ໃນນີ້ ມີ 15 ກອງພັນຖືກດັບສູນກ້ຽງ, ກອບກູ້ເອົາ ບໍລິເວນທົ່ງໄຫຫີນຊຽງຂວາງ, ທາງເລກ 9 ພ້ອມນີ້ໄດ້ປົດປ່ອຍສາລະວັນ, ອັດຕະປື ປົດປ່ອຍດິນແດນ ໄດ້ 4/5 ແລະ ພົນລະເມືອງກວ່າເຄິ່ງໜຶ່ງ ຂອງປະເທດ. ຈາກໄຊຊະນະຄັ້ງນີ້ ໄດ້ບັງຄັບໃຫ້ໃຫ້ພວກສັດຕູ ຍອມເຊັນສັນຍາວຽງຈັນ ວັນທີ 21 ກຸມພາ ປີ 1973 ກ່ຽວກັບລາວ, ຍອມຈັດຕັ້ງລັດຖະບານປະສົມ, ຄະນະມົນຕີປະສົມການເມືອງແຫ່ງຊາດ ກຳນົດເອົາ 2 ຕົວເມືອງເປັນກາງ (ນະຄອນຫຼວງວຽງຈັນ, ຫຼວງພະບາງ) ສ້າງຄວາມປອງດອງຊາດ ຄັ້ງທີ III.

**2.3 ໄລຍະທີສາມ: ປີ 1973 - 1975, ຕໍ່ສູ້ປົກປັກຮັກສາສັນຕິພາບ ແລະ ກຽມຢຶດອຳນາດທົ່ວປະເທດ.**

- ສັນຍາວຽງຈັນ 21 ກຸມພາ 1973 ໄດ້ເຮັດໃຫ້ສັນຕິພາບກັບຄືນມາ. ການຕໍ່ສູ້ກູ້ຊາດຕ້ານຈັກກະພັດຜູ້ຮຸກຮານ ແລະ ລູກແຫຼ້ງຕີນມືໄດ້ສຳເລັດໂດຍພື້ນຖານ, ແຕ່ປະເທດຊາດຍັງຖືກແບ່ງເປັນ 3 ເຂດ ( ເຂດປົດປ່ອຍ, ເຂດເປັນກາງ ແລະ ເຂດຄວບຄຸມຊົ່ວຄາວ ຂອງຝ່າຍວຽງຈັນ ).
- ຢືນຢູ່ຕໍ່ໜ້າສະພາບການດັ່ງກ່າວ, ພັກເຮົາ ກໍໄດ້ຮີບຮ້ອນປັບປຸງກໍ່ສ້າງກຳລັງປະກອບອາວຸດໃຫ້ກາຍເປັນກຳລັງອັນແຫຼມຄົມ ຂອງພັກ ເພື່ອປົກປັກຮັກສາໝາກຜົນ ຂອງການປະຕິວັດ ແລະ ໃນວັນທີ 25 ເດືອນ 4 ປີ 1974 ກໍໄດ້ສ້າງຕັ້ງເຫຼົ່າຮົບຕິພິເສດຂຶ້ນ, ພ້ອມກັນນັ້ນ ພວກເຮົາໄດ້ຈັດຕັ້ງ 2 ກອງພັນ ເຮັດໜ້າທີ່ປ້ອງກັນຢູ່ 2 ຕົວເມືອງເປັນກາງ ເພື່ອປົກປັກຮັກສາລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ.
- ວັນທີ 5 ເດືອນ 5 ປີ 1975 ສູນກາງພັກໄດ້ຮຽກຮ້ອງມາຍັງທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນລຸກຮື້ຂຶ້ນຢຶດອຳນາດການປົກຄອງໃນເຂດເປັນກາງ ແລະ ເຂດຄວບຄຸມຊົ່ວຄາວ ຂອງຝ່າຍວຽງຈັນ ດ້ວຍ 3 ບາດຄ້ອນຍຸດທະສາດ (**ການທະຫານໜູນໜຶບ, ການລຸກຮື້ຂຶ້ນ ຂອງປະຊາຊົນ, ການແຍກຕົວ ຂອງທະຫານສັດຕູ ແລ້ວຕ້ານຄືນກັບອຳນາດການປົກຄອງເກົ່າ)**. ໃນນັ້ນ ກຳລັງປະກອບອາວຸດເຮົາ ໄດ້ກາຍເປັນກຳລັງໜູນໜຶບອັນແຂງແຮງໃຫ້ແກ່ການລຸກຮື້ຂຶ້ນ ຂອງປະຊາຊົນໃນທົ່ວປະເທດ.
- ຮອດກາງເດືອນ 5 ປີ 1975 ພວກເຮົາສາມາດຢຶດເອົາເຂດກວດກາຊົ່ວຄາວ ຂອງຝ່າຍກົງກັນຂ້າມໄດ້ ແລະ ສ້າງທ່າປິດລ້ອມ, ຕັດແບ່ງ ລະຫວ່າງ ທະຫານພາກ I, ທະຫານພາກ V ແລະ ສ້າງທ່າປິດລ້ອມ 2 ຕົວເມືອງເປັນກາງດ້ວຍຫຼາຍທິດ, ຫຼາຍປີກເຮັດໃຫ້ຝ່າຍກົງກັນຂ້າມຕົກ ຢູ່ໃນທ່າເສຍປຽບ ຍາກທີ່ຈະຕ້ານຄືນໄດ້.
- ວັນທີ 13-18 ເດືອນ 5 ປີ 1975 ກຳລັງ ຂອງພວກເຮົາໄດ້ຢຶດເອົາຄ້າຍສັດຕູ ຢູ່ອີໄລ, ຂຸດສາມບາດ, ຄ້າຍຈີນາຍໂມ້ ເຊິ່ງເປັນສູນຝຶກນາຍທະຫານໃຫຍ່ກວ່າໝູ່ ຢູ່ວຽງຈັນ ທັງເປັນສູນບັນຊາການທະຫານພາກ V ແລະ ຢຶດເອົາກະຊວງປ້ອງກັນປະເທດ.
- ວັນທີ 21 ເດືອນ 5 ປີ 1975 ກຳລັງພວກເຮົາໄດ້ເຄື່ອນເຂົ້າຊ່ວຍໜູນປະຊາຊົນ ແລະ ຢຶດເອົາຈຸດສຳຄັນຍຸດທະສາດທັງໝົດ ແຂວງຈຳປາສັກ ແລະ ສະຫວັນນະເຂດ.
- ວັນທີ 23 ເດືອນ 8 ປີ 1975 ຊາວນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ 2 ໝື່ນກວ່າຄົນໄດ້ຈັດຕັ້ງໂຮມຊຸມນຸມໃຫຍ່ ຢູ່ເດີ່ນທາດຫຼວງ, ປະກາດຢຶດອຳນາດ ສ້າງຕັ້ງອຳນາດການປົກຄອງ

ປະຕິວັດນະຄອນຫຼວງວຽງຈັນ ແລະ ກໍ່ເປັນສັນຍາລັກໃຫ້ແກ່ການຢຶດອຳນາດຢ່າງສັນຕິວິທີ ປະສະຈາກການນອງເລືອດໃນທົ່ວປະເທດຢ່າງສົມບູນ.

ວັນທີ 2 ທັນວາ 1975 ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ໄດ້ປະກາດລົບລ້າງລະບອບລາຊາທິປະໄຕ, ສ້າງຕັ້ງລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນ ແລະ ກໍ່ສ້າງປະເທດລາວ ໃຫ້ເປັນປະເທດສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ແລະ ວັດທະນະຖາວອນ.

**ຂ. ປະຕິບັດ 2 ໜ້າທີ່ຍຸດທະສາດ: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.**

**1. ແຕ່ປີ 1975 - 1985 ໄລຍະຕົ້ນແຫ່ງການປະຕິບັດ 2 ໜ້າທີ່ຍຸດທະສາດ ຂອງພັກ:**

ໂດຍປະຕິບັດຕາມການຊີ້ນຳ ຂອງສູນກາງພັກ, ໜ້າທີ່ຕົ້ນຕໍ ຂອງກອງທັບ ແມ່ນປົກປັກຮັກສາໝາກຜົນ ຂອງການປະຕິວັດ, ຮັກສາສັນຕິພາບ, ເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງ ສປປ ລາວ. ກອງທັບປະຊາຊົນລາວ ໄດ້ສົມທົບກັບອົງການຕ່າງໆ ຮີບຮ້ອນຈັດຕັ້ງ ແລະ ກໍ່ສ້າງອຳນາດການປົກຄອງໃໝ່ທຸກຂັ້ນ, ຮິບໂຮມ ແລະ ຄຸ້ມຄອງພື້ນຖານວັດຖຸເຕັກນິກການທະຫານຝ່າຍຂວາວຽງຈັນ, ກວດກາບຸກຄະລາກອນ, ນາຍທະຫານ, ກົງຈັກ ຂອງລະບອບເກົ່າ ແລະ ຈັດຕັ້ງການສຳມະນາ, ສຶກສາອົບຮົມດັດສ້າງກຳລັງທະຫານ ຂອງຝ່າຍວຽງຈັນ.

ວັນທີ 24 ເດືອນ 4 ປີ 1980 ທ່ານ ສຸພານຸວົງ ປະທານປະເທດ ໄດ້ເຊັນລັດຖະດາລັດ ກ່ຽວກັບຕຳແໜ່ງປະດັບຊັ້ນ ຢູ່ໃນກອງທັບ ແລະ ກຳລັງປ້ອງກັນຄວາມສະຫງົບ; ວັນທີ 29 ເດືອນ 11 ປີ 1980 ຄະນະບໍລິຫານງານສູນກາງພັກ ແລະ ລັດຖະບານ ໄດ້ເປັນກຽດຈັດຕັ້ງພິທີປະດັບຊັ້ນຄັ້ງທຳອິດໃຫ້ແກ່ພະນັກງານນັກຮົບໃນກຳລັງປະກອບອາວຸດປະຕິວັດ ແລະ ໄດ້ປ່ຽນຊື່ ຈາກ**ກອງທັບປົດປ່ອຍປະຊາຊົນລາວ ມາເປັນກອງທັບປະຊາຊົນລາວ** ໃນວັນທີ 16 ເດືອນ 7 ປີ 1982 ທັງປະກາດສ້າງຕັ້ງ 5 ກອງພົນທະຫານຮາບ ແລະ 4 ກອງພັນໃຫຍ່ເອກະລາດ.

**2. ໄລຍະປີ 1986 - 2000 ສືບຕໍ່ປະຕິບັດ 2 ໜ້າທີ່ຍຸດທະສາດ ແລະ ປະຕິບັດແນວທາງປ່ຽນແປງ ໃໝ່ ຂອງພັກ.**

ກອງທັບເຮົາໄດ້ເປັນກຳລັງຫຼັກແຫຼ່ງໃນການປະຕິບັດແນວທາງປ້ອງກັນຊາດ - ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຂອງພັກ ເຊິ່ງຍາມໃດກໍ່ໄດ້ຍົກສູງສະຕິລະວັງຕົວ, ກຽມພ້ອມສູ້ຮົບ ແລະ ໃນປີ 1984 ພວກປະຕິການຂວາຈັດໄທ ໄດ້ບຸກຍຶດ 3 ບ້ານ ຢູ່ເມືອງປາກລາຍ ( ບ້ານໃໝ່, ບ້ານກາງ, ບ້ານສະຫວ່າງ ) ແລະ ເມືອງບໍ່ແຕນ ແຂວງໄຊຍະບູລີ ປີ 1987 - 1988 ເພື່ອເປັນຂໍ້ອ້າງເຂົ້າແຊກແຊງດ້ວຍກຳລັງທະຫານ ແລະ ໂຄ່ນລົ້ມລະບອບໃໝ່ ຂອງພວກເຮົາ. ພວກເຮົາກໍ່ໄດ້ຕໍ່ສູ້, ປົກປັກຮັກສາເຂດແດນໄວ້ໄດ້ຢ່າງໝັ້ນຄົງ.

**3. ໄລຍະແຕ່ປີ 2000 - 2024 ( ຊຸມປີຕົ້ນ ຂອງສະຕະວັດທີ 21 ).**

ກອງທັບເຮົາ ເປັນເຈົ້າການປະຕິບັດວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ເຮັດໃຫ້ປະເທດຊາດມີຄວາມສະຫງົບໂດຍພື້ນຖານ, ກອງທັບເຮົາໄດ້ສຸມໃສ່ປັບປຸງກໍ່ສ້າງກຳລັງ ປັດຈຸບັນ ກອງທັບປະຊາຊົນລາວ ໄດ້ມີການປັບປຸງກໍ່ສ້າງທັງ 3 ກຳລັງ ເພື່ອເປັນຫຼັກແຫຼ່ງແກ່ນສານໃຫ້ແກ່ການປົກປັກຮັກສາເອກະລາດ ອຳນາດອະທິປະໄຕ ແລະ ຜືນແຜ່ນດິນຄົບຖ້ວນ ຂອງ

ຊາດເຊັ່ນ: ( ກຳລັງຫຼວງ, ກຳລັງທ້ອງຖິ່ນ, ກຳລັງທະຫານລາດກອງຫຼອນ ). ສຳລັບ ກົມກອງກຳລັງຫຼວງ ພວກເຮົາໄດ້ສ້າງຕັ້ງຫຼາຍເຫຼົ່າຮົບກົມກອງ ເຊັ່ນ: ທະຫານບົກ, ທະຫານອາກາດ ແລະ ບັນດາເຫຼົ່າຮົບ ຕ່າງໆເຊັ່ນ: ປືນໃຫຍ່ໜ້າດິນ, ລົດຕັງຍານເກາະ, ກຳລັງໄຟປ້ອງກັນອາກາດ, ຊ່າງແສງ, ພະລາທິການ, ເຕັກນິກ ແລະ ເຫຼົ່າຮົບອື່ນໆ; ໄດ້ສ້າງຕັ້ງ ເກືອບ 20 ກອງພັນໃຫຍ່ເອກະລາດ, 5 ກອງພົນ ແລະ ຫຼາຍ ກົມກອງທຽບເທົ່າ ທີ່ມີການພັດທະນາ, ຍົກລະດັບນັບມື້ ນັບທັນສະໄໝ; ກຳລັງປະກອບອາວຸດ ຢູ່ຂັ້ນ ທ້ອງຖິ່ນ ກໍໄດ້ຮັບການປັບປຸງໃຫ້ມີຄວາມເຂັ້ມແຂງ ແລະ ສາມາດຜັນຂະຫຍາຍແນວທາງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານເປັນຢ່າງດີ.

ກຳລັງກອງທັບເຮົາ ຍັງໄດ້ເອົາໃຈໃສ່ຍົກລະດັບທາງດ້ານທິດສະດີ, ເພີ່ມທະວີວຽກງານ ຝຶກແອບຮ່ຳຮຽນສິລະປະຍຸດ - ຍຸດທະວິທີ ຢູ່ໃນກົມກອງ, ຢູ່ບັນດາວິທະຍາຄານ ແລະ ໂຮງຮຽນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ; ນອກນີ້ ຍັງໄດ້ຍູ້ແຮງການປັບປຸງກໍ່ສ້າງຄ້າຍຄູໃຫ້ແໜ້ນໜາຖາວອນ ແລະ ກໍ່ສ້າງພື້ນຖານອຸດສາ ຫະກຳປ້ອງກັນຊາດ, ຮັບປະກັນທາງດ້ານພາຫະນະເຕັກນິກໃຫ້ແກ່ກອງທັບ ແລະ ຮັບໃຊ້ສັງຄົມ, ປັດຈຸບັນກອງທັບເຮົາມີການປະກອບວັດຖຸເຕັກນິກທັນສະໄໝສົມຄວນ ສາມາດຕອບສະ ໜອງໃຫ້ແກ່ວຽກງານປ້ອງກັນຊາດໃນໄລຍະໃໝ່ ໄດ້ໂດຍພື້ນຖານ.

ກອງທັບເຮົາ ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການປ້ອງກັນ, ຄວບຄຸມໄພພິບັດ ແລະ ຊ່ວຍເຫຼືອປະຊາຊົນຜູ້ປະສົບໄພພິບັດທຳມະຊາດຕ່າງໆ ທີ່ເກີດຂຶ້ນໃນຂອບເຂດທົ່ວປະເທດ; ພ້ອມກັນ ນັ້ນເອົາໃຈໃສ່ປະກອບສ່ວນປັບປຸງກໍ່ສ້າງພື້ນຖານການເມືອງ, ກໍ່ສ້າງທ່າສະໜາມສົງຄາມປະຊາຊົນ 3 ຂັ້ນ ຕິດພັນກັບວຽກງານ 3 ສ້າງ ຢູ່ທ້ອງຖິ່ນຕາມ 4 ເນື້ອໃນ 4 ຄາດໝາຍ ແລະ ສືບທອດມູນເຊື້ອຄວາມ ສາມັກຄີ ກັບກອງທັບປະເທດເພື່ອນມິດສາກົນ, ປະຕິບັດນະໂຍບາຍເພີ່ມມິດຫຼຸດຜ່ອນສັດຕູ, ຮັບປະກັນສະຖຽນລະພາບ ຂອງລະບອບການເມືອງ, ຮັກສາຄວາມສະຫງົບປອດໄພຕາມຊາຍແດນ. ປັດຈຸບັນ ກອງທັບເຮົາ ໄດ້ສ້າງຕັ້ງສາຍພົວພັນດ້ານປ້ອງກັນຊາດກັບ 26 ປະເທດ.

ກອງທັບປະຊາຊົນລາວ ໄດ້ເຮັດສຳເລັດໜ້າທີ່ໃນໂອກາດທີ່ໄດ້ຮັບກຽດເປັນເຈົ້າພາບ ແລະ ເປັນ ປະທານກອງປະຊຸມ ລັດຖະມົນຕີປ້ອງກັນປະເທດອາຊຽນ 2 ຄັ້ງຜ່ານມາ ຄື: ຄັ້ງທີ 1 ໃນປີ 2016, ຄັ້ງທີ 2 ໃນປີ 2024. ເຮັດໃຫ້ບົດບາດ ຂອງກອງທັບປະຊາຊົນລາວ ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ , ໄດ້ຮັບການສະໜັບສະໜູນຢ່າງຈິງໃຈຈາກບັນດາ ປະເທດເພື່ອນມິດຍຸດທະສາດ, ອາຊຽນ ແລະ ໃນ ໂລກ.

ເພື່ອຢັ້ງຢືນເຖິງຜົນງານອັນໃຫຍ່ຫຼວງທີ່ກອງທັບເຮົາຍາດມາໄດ້ຕະຫຼອດໄລຍະ ຜ່ານມາ, ພັກ ແລະ ລັດຖະບານ ໄດ້ຕົກລົງມອບຫຼຽນໄຊຄຳ ແຫ່ງຊາດຊຶ່ງເປັນຫຼຽນສູງສຸດ ຂອງຊາດລາວ ໃຫ້ແກ່ກອງທັບ ປະຊາຊົນລາວ ຈຳນວນ 5 ໜ່ວຍ.

- ຄັ້ງທີ 1 ວັນທີ 20 ມັງກອນ 1979;
- ຄັ້ງທີ 2 ວັນທີ 13 ມິນາ 1988;
- ຄັ້ງທີ 3 ວັນທີ 20 ມັງກອນ 1994;
- ຄັ້ງທີ 4 ວັນທີ 20 ມັງກອນ 2009;

- ຄັ້ງທີ 5 ວັນທີ 20 ມັງກອນ 2019. ນອກຈາກນັ້ນ ຍັງໄດ້ຮັບຫຼຽນໄຊ, ຫຼຽນກາ ແລະ ໃບຍ້ອງຍໍປະເພດອື່ນໆອີກຈຳນວນຫຼາຍ.

ພັກ ແລະ ລັດຖະບານ ໄດ້ຕົກລົງມອບນາມມະຍົດໃຫ້ແກ່ກອງພັນວິລະຊົນ 07 ກອງພັນ, ກອງຮ້ອຍວິລະຊົນ 37 ກອງຮ້ອຍ, ວິລະຊົນແຫ່ງຊາດ 68 ສະຫາຍ ແລະ ນັກຮົບແຂ່ງຂັນ 415 ສະຫາຍ.

**III. ທາດແທ້ ແລະ ມູນເຊື້ອອັນສະຫງ່າອົງອາດ ຂອງກອງທັບປະຊາຊົນລາວ.**

**ກ. ທາດແທ້ ຂອງກອງທັບປະຊາຊົນລາວ.**

**1. ທາດແທ້ ຂອງຊົນຊັ້ນກຳມະກອນ.** ຍ້ອນກອງທັບປະຊາຊົນລາວ ໂດຍແມ່ນພັກປະຊາຊົນປະຕິວັດລາວເປັນຜູ້ຈັດຕັ້ງ, ນຳພາບັນຊາ ແລະ ສຶກສາອົບຮົມ, ດັ່ງນັ້ນ ກອງທັບປະຊາຊົນລາວ ຈຶ່ງແມ່ນກອງທັບທີ່ຢຶດໝັ້ນ ລັດທິມາກ-ເລນິນ, ແມ່ນກອງທັບ ຂອງປະຊາຊົນທີ່ມີຄວາມຈົງຮັກພັກດີ, ມີຄວາມຊື່ສັດບໍລິສຸດ, ມີລະບຽບວິໄນທີ່ເຂັ້ມງວດ ແລະ ເປັນເຄື່ອງ ມືອັນແຫຼມຄົມ ຂອງພັກ.

**2. ທາດແທ້ປະຕິວັດ.** ຍ້ອນກອງທັບປະຊາຊົນລາວ ນັບແຕ່ມື້ສ້າງຕັ້ງຂຶ້ນມາໄດ້ກາຍເປັນກຳລັງຫຼັກແຫຼ່ງໃນຂະບວນການຕໍ່ສູ້ປະຕິວັດ ຂອງປະຊາຊົນລາວບັນດາເຜົ່າ, ຕ້ານຈັກກະພັດຜູ້ຮຸກຮານ ແລະ ໂຄ່ນລົ້ມລະບອບສັກດີນາປະຕິການສ້າງຕັ້ງລະບອບໃໝ່ຂຶ້ນແທນ ແລະ ສືບຕໍ່ປົກປັກຮັກສາ, ສ້າງສາພັດທະນາປະເທດຊາດໄວ້ໃຫ້ໝັ້ນຄົງ ແລະ ວັດທະນະຖາວອນ.

**3. ທາດແທ້ປະຊາຊົນ.** ຍ້ອນກອງທັບປະຊາຊົນລາວ ແມ່ນກຳເນີດມາຈາກປະຊາຊົນ, ໂດຍປະຊາຊົນ, ຕໍ່ສູ້ເພື່ອຄວາມສົມບູນພູນສຸກ ຂອງປະຊາຊົນລາວບັນດາເຜົ່າ.

**ຂ. ມູນເຊື້ອອັນສະຫງ່າງາມ ຂອງກອງທັບປະຊາຊົນລາວ.**

**1. ມູນເຊື້ອ ຄວາມຈົງຮັກພັກດີ ຕໍ່ພັກ, ຕໍ່ປະຊາຊົນ, ຕໍ່ອຸດົມການສັງຄົມນິຍົມ:**

ຍາມໃດກໍ່ມີຄວາມຈົງຮັກພັກດີ, ຄວາມບໍລິສຸດຜຸດຜ່ອງ, ຄວາມເດັດດ່ຽວໝຽວແໜ້ນ, ມີລະບຽບແບບແຜນທີ່ເຂັ້ມງວດ, ມີຄວາມອົງອາດກ້າຫານ, ມີນໍ້າໃຈເສຍສະຫຼະອັນສູງສົ່ງ ເພື່ອຊາດ, ເພື່ອປະຊາຊົນຢ່າງແທ້ຈິງ.

**2. ມູນເຊື້ອ ນໍ້າໃຈຕໍ່ສູ້ພິລະອາດຫານ, ກ້າແກ່ນ, ໝຽວແໜ້ນ ແລະ ມີໄຫວພິບ:**

ກອງທັບເຮົາໄດ້ສືບທອດມູນເຊື້ອພິລະອາດຫານ ຂອງວິລະບຸລຸດຂອງຊາດ, ມີຄວາມອົງອາດກ້າຫານ ບໍ່ຫວັ່ນໄຫວຄອນແຄນຕໍ່ຄວາມຫຍຸ້ງຍາກ ແລະ ອຸປະສັກຕ່າງໆ, **"1 ຄົນລົ້ມລົງ, ມີຫຼາຍໆຄົນລຸກຂຶ້ນ"**, ຍິ່ງສູ້ຮົບກໍ່ຍິ່ງເຕີບໃຫຍ່ເຂັ້ມແຂງ ຍິ່ງຕີກໍ່ຍິ່ງໄດ້ຮັບໄຊຊະນະ, ຜ່ານພຶດຕິກຳແຫ່ງການຕໍ່ສູ້ ຍືດເຍື້ອຍາວນານນັ້ນ ໄດ້ເກີດມີນັກຮົບດີເດັ່ນ, ນັກຮົບແຂ່ງຂັນ ແລະ ວິລະຊົນ ນັບທັງກຳລັງຫຼວງ, ກຳລັງທ້ອງຖິ່ນ, ກອງຫຼອນ ໃນນີ້ຍັງມີກຳລັງເພດຍິງຮ່ວມນຳເປັນຈຳນວນຫຼວງຫຼາຍ.

**3. ມູນເຊື້ອ ນໍ້າໃຈດຸໝັ່ນຂະຫຍັນພຽນ, ອອກແຮງງານເພີ່ມພູນຜະລິດຜົນ ແລະ ປະຢັດມັດທະຍັດ:**

ກອງທັບເຮົາຍາມໃດ, ກໍ່ໄດ້ສືບຕໍ່ຮັກສາມູນເຊື້ອອັນດີງາມໃນການອອກແຮງງານເພີ່ມພູນຜະລິດຜົນ, ສ້າງພະລາທິການກັບທີ່, ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງເທື່ອລະກ້າວ, ປັບປຸງຊີວິດການເປັນຢູ່ ຂອງພະນັກງານ, ຮັກຮົບນັບມື້ດີຂຶ້ນ.

**4. ມູນເຊື້ອ ຍຶດໝັ້ນການພົວພັນ, ສາມັກຄີແບບກາຍອິນຊີອັນແໜ້ນແຟ້ນ ກັບປະຊາຊົນບັນດາເຜົ່າ:**

ກອງທັບເຮົາ ເວລາໃດກໍ່ຖືວ່າຄວາມສາມັກຄີ ລະຫວ່າງ ກອງທັບກັບປະຊາຊົນບັນດາເຜົ່ານັ້ນຄື **"ປາກັບນໍ້າ"** ເປັນປັດໄຈພື້ນຖານສາຄັນກວ່າໝູ່ໃນພາລະກິດຕໍ່ສູ້ ຂອງກອງທັບເຮົາ ໂດຍອີງໃສ່ປະຊາຊົນຢ່າງໜັກແໜ້ນ ເພື່ອຕໍ່ສູ້ປົກປ້ອງປະເທດຊາດ ກໍຄືໝາກຜົນ ຂອງການປະຕິວັດໄວ້ໃຫ້ໝັ້ນຄົງ.

**5. ມູນເຊື້ອ ພົວພັນຮ່ວມມືພາຍໃນ ແລະ ສາກົນຢ່າງກົມກຽວບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ:**

ໄດ້ສາມັກຄີ ກັບກອງທັບປະເທດສັງຄົມນິຍົມອ້າຍນ້ອງ ແລະ ບັນດາປະເທດເພື່ອນມິດທີ່ກ້າວໜ້າໃນໂລກ, ໂດຍສະເພາະແມ່ນຄວາມສາມັກຄີຮ່ວມສຳພັນສູ້ຮົບແບບພິເສດ ກັບກອງທັບປະຊາຊົນຫວຽດນາມອ້າຍນ້ອງ ແລະ ສາມັກຄີຮ່ວມມືຮອບດ້ານ ກັບກອງທັບປົດປ່ອຍປະຊາຊົນຈີນ.

**6. ກອງທັບປະຊາຊົນລາວ ເວລາໃດກໍ່ຮັກສາມູນເຊື້ອອັນດີງາມ, ພາຍໃນມີປະຊາທິປະໄຕ ແລະ ມີລະບຽບວິໄນເຂັ້ມງວດ:**

ກອງທັບປະຊາຊົນລາວ ຍາມໃດກໍ່ຖືເອົາປະຊາຊົນເປັນກົກ, ເປັນບໍ່ເກີດ, ເປັນເຫງົ້າພະລັງແຮງ ແລະ ເປັນບ່ອນອີງອັນແໜ້ນແກ່ນ ຂອງຕົນ, ການເພີ່ມທະວີກ້ອນກຳລັງສາມັກຄີອັນແໜ້ນແກ່ນ ຂອງປະຊາຊົນບັນດາເຜົ່າ, ຄວາມເປັນເອກະພາບໃນລະດັບສູງທາງດ້ານການເມືອງ - ແນວຄິດ ລະຫວ່າງປະຊາຊົນ ກັບກອງທັບ, ຄວາມໄວ້ເນື້ອເຊື່ອໃຈ, ຄວາມຮັກຫອມຕອມຕູ້ມ ແລະ ການປະກອບສ່ວນຊ່ວຍເຫຼືອຢ່າງຈິງໃຈຂອງປະຊາຊົນລາວບັນດາເຜົ່າ ຕໍ່ກອງທັບ ນັ້ນເປັນກຳລັງແຮງຊະນະເລີດ ຂອງກອງທັບປະຕິວັດ.

**IV. ເພື່ອສືບຕໍ່ເສີມຂະຫຍາຍທາດແທ້ ແລະມູນເຊື້ອອັນສະຫງ່າງາມ ຂອງຕົນ, ກອງທັບປະຊາຊົນເຮົາຈະຕັ້ງໜ້າປະຕິບັດບັນດາໜ້າທີ່ ດັ່ງຕໍ່ໄປນີ້:**

1. ຄະນະພັກ-ຄະນະບັນຊາແຕ່ລະຂັ້ນ ຕ້ອງເອົາໃຈໃສ່ຈັດຕັ້ງສຶກສາອົບຮົມມູນເຊື້ອ, ທາດແທ້ປະຕິວັດ ແລະ ທາດແທ້ປະຊາຊົນ ຂອງກອງທັບປະຊາຊົນໃຫ້ເລິກເຊິ່ງ ແລະ ໜັກແໜ້ນ; ເພີ່ມທະວີຄວາມບໍລິສຸດ ຕໍ່ປະເທດຊາດ, ຕໍ່ພັກ ແລະ ປະຊາຊົນ, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຂອງພັກ, ໂດຍສະເພາະ ການຈັດຕັ້ງຜັນ ຂະຫຍາຍຜົນກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI, ມະຕິ04 ວ່າດ້ວຍການສ້າງເສດຖະ ກິດເອກະລາດເປັນເຈົ້າຕົນເອງ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກກະຊວງ. ໂດຍສະເພາະ ມະຕິວ່າດ້ວຍ 4 ໜ້າທີ່ໃຫຍ່ 26 ແຜນງານ ຂອງຄະນະພັກກະຊວງປ້ອງກັນປະເທດ ໃຫ້ເປັນຂະບວນການ ແລະ ມີໝາກຜົນຕົວຈິງ.

2. ຕັ້ງໜ້າປຸກລະດົມທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນ ເຂົ້າຮ່ວມວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ເຮັດໃຫ້ໃນທົ່ວປະເທດມີຄວາມສະຫງົບຢ່າງໜັກແໜ້ນ ດ້ວຍຍຸດທະສາດທັນລົງກໍ່ສ້າງຮາກຖານການເມືອງ, ສ້າງທ່າສະໜາມ ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ 3 ຂັ້ນທົ່ວປວງຊົນຮອບດ້ານ ຕິດພັນກັບວຽກງານ 3 ສ້າງ ແລະ ແກ້ໄຂໜໍ່ແໜງຄວາມບໍ່ສະຫງົບໃຫ້ເດັດຂາດ ແລະ ທັນກັບຄວາມຮຽກຮ້ອງຕ້ອງການ ຂອງສະພາບການໃໝ່.

3. ເພີ່ມທະວີການນຳພາ ຂອງພັກ ຕໍ່ກຳລັງປະກອບອາວຸດປ້ອງກັນຊາດ, ສ້າງກອງທັບປະຊາຊົນລາວໃຫ້ໜັກແໜ້ນທາງດ້ານຄຸນທາດການເມືອງ, ຄຸນທາດປະຕິວັດ, ມີແບບແຜນ, ມີລະບຽບວິໄນ, ມີຄວາມທັນສະໄໝ ແລະ ເອົາໃຈໃສ່ ກໍ່ສ້າງຖັນແຖວນັກຮົບດ້ວຍການຍົກລະດັບສີລະປະຍຸດຍຸດທະວິທີໃຫ້ມີຄວາມຄ່ອງແຄ້ວ ຕິດພັນກັບການສ້າງໜ່ວຍພັກ ປອດໃສ ເຂັ້ມແຂງ ໜັກແໜ້ນ ແລະ ສ້າງກອງປອດໃສ, ປອດໄພ ແລະ ປອດຄະດີ; ກໍ່ສ້າງພະນັກງານສືບທອດທີ່ມີຄຸນນະພາບ ແລະ ສະກັດກັ້ນບັນດາປະກົດການຫຍໍ້ທໍ້ໃນກອງທັບ.

4. ເຊີດຊູນໍ້າໃຈເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ນໍ້າໃຈປະຢັດມັດທະຍັດ, ສຸມໃສ່ສ້າງພະລາທິການກັບທີ່, ຂຸດຄົ້ນທ່າແຮງບົ່ມຊ້ອນ ຂອງກົມກອງທ້ອງຖິ່ນ ເຂົ້າໃນການ ປັບປຸງກໍ່ສ້າງຄ້າຍຄູ, ຍູ້ແຮງການຜະລິດ ແລະ ຂະຫຍາຍເຂດການຜະລິດກະສິກຳໃນທົ່ວກອງທັບເພື່ອຍົກລະດັບຊີວິດການເປັນຢູ່ ຂອງກອງທະຫານໃຫ້ດີຂຶ້ນ ແລະ ຜະລິດເປັນສິນຄ້າ ເພື່ອສ້າງລາຍຮັບໃຫ້ແກ່ກົມກອງ ແລະ ກອງທັບ.

5. ເຊື່ອມຊຶມ, ກຳແໜ້ນ ແລະ ປະຕິບັດແນວທາງການຕ່າງປະເທດ ຂອງພັກ ໃຫ້ຖືກຕ້ອງ, ເພີ່ມທະວີການພົວພັນຮ່ວມມື ກັບກອງທັບບັນດາປະເທດສັງຄົມນິຍົມ ອ້າຍນ້ອງ, ສສ ຫວຽດນາມ, ສປ ຈີນ ແລະປະເທດເພື່ອນມິດ ບັນດາປະເທດໃກ້ຄຽງ, ຮ່ວມມືໃນຂອບອາຊຽນ ເພື່ອປະກອບສ່ວນເຂົ້າໃນການເສີມສ້າງສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືສາກົນ.

6. ສືບຕໍ່ຈັດຕັ້ງປະຕິບັດຢ່າງແຂງແຮງ ຕໍ່ບັນດາຄາດໝາຍສູ້ຊົນ ໃນທ້າຍສະໄໝທີ່ກອງປະຊຸມໃຫຍ່ອົງຄະນະພັກແຕ່ລະຂັ້ນວາງອອກ ໂດຍຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ສຳເລັດຜົນ.

**ຄໍາຂວັນ:**

**- ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝັ້ນຍືນ !**

**- ພັກປະຊາຊົນປະຕິວັດລາວທີ່ມີກຽດສະຫງ່າ ໝັ້ນຍືນ !**

**- ຊົມເຊີຍວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 76 ປີ ຢ່າງສຸດໃຈ ! (ຊົມເຊີຍ)**